ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

## ທ່ານຮອງຜູ້ວ່າການ ທຫລ ການເຂົ້າຮ່ວມກອງປະຊຸມຄະນະກຳມະການອາວຸໂສລະດັບສູງອາຊຽນ ຄັ້ງທີ 31 ໃນລະຫວ່າງວັນທີ 05-06 ມິນາ 2026 ຢູ່ປະເທດຟີລິບປິນ




ທ່ານ ສຸລິສັກ ທຳນຸວົງ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ສຳເລັດການປະຕິບັດພັນທະຂອງ ສປປ ລາວເຂົ້າຮ່ວມກອງປະຊຸມຄະນະກຳມະການອາວຸໂສລະດັບສູງອາຊຽນ ຄັ້ງທີ 31 ໃນລະຫວ່າງວັນທີ 05-06 ມີນາ 2026 ທີ່ Boracay ປະເທດ ຟີລິບປິນ ໄດ້ໄຂຂຶ້ນທ່າມກາງບັນຍາກາດການເປັນເຈົ້າພາບ ແລະ ປະທານອາຊຽນປະຈຳປີ 2026 ຂອງປະເທດ ຟີລິບປິນ ພາຍໃຕ້ຄຳຂັວນ: "ນຳທາງອະນາຄົດຂອງພວກເຮົາໄປດ້ວຍກັນ" ກອງປະຊຸມຄັ້ງນີ້, ໄດ້ຮັບການເປັນປະທານຮ່ວມຂອງທ່ານຮອງຜູ້ວ່າການ ທະນາຄານແຫ່ງລັດ ຫວຽດນາມ ແລະ ທະນາຄານກາງ ອິນໂດເນເຊຍ, ຊຶ່ງມີບັນດາຜູ້ເຂົ້າຮ່ວມຈາກ 11 ທະນາຄານກາງຂອງປະເທດສະມາຊິກອາຊຽນ, ກອງເລຂາອາຊຽນ ແລະ ບັນດາອົງການຈັດຕັ້ງທາງການເງິນສາກົນທີ່ກ່ຽວຂ້ອງຈາກພາກພື້ນ ແລະ ສາກົນ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ແລກປ່ຽນຄຳຄິດຄຳເຫັນຮ່ວມກັນຕໍ່ກັບບູລິມະສິດປະທານອາຊຽນປີ 2026 ທີ່ຕິດພັນກັບຂະແໜງການເງິນ-ທະນາຄານ ຊຶ່ງໄດ້ເນັ້ນໜັກການສ້າງຄວາມຍືນຍົງ ແລະ ຄວາມເຂັ້ມແຂງຂອງຕະຫຼາດທຶນອາຊຽນ, ສົ່ງເສີມການເຊື່ອມໂຍງທາງດ້ານລະບົບການຊຳລະໃນພາກພື້ນອາຊຽນໃຫ້ທົ່ວເຖິງ ແລະ ສ້າງຂົງເຂດເສດຖະກິດແບບມີສ່ວນຮ່ວມເພື່ອຊຸກຍູ້ ແລະ ສົ່ງເສີມວຽກງານດ້ານການເງິນໃຫ້ມີຄວາມກ້າວໜ້າ ແລະ ໝັ້ນຄົງ. ພ້ອມນີ້, ອົງການຈັດຕັ້ງທາງການເງິນສາກົນທີ່ກ່ຽວຂ້ອງ ກໍ່ໄດ້ລາຍງານໃຫ້ທີ່ປະຊຸມເພື່ອຮັບຊາບ ແລະ ແລກປ່ຽນຄຳຄິດຄຳເຫັນລະຫວ່າງກັນຕໍ່ກັບສະພາບການທາງດ້ານເສດຖະກິດມະຫາພາກ ແລະ ການພັດທະນາທາງດ້ານການເງິນໃນພາກພື້ນ ແລະ ສາກົນ. ພ້ອມທັງ, ໄດ້ຮັບຮອງເອົາບັນດາຄວາມຄືບໜ້າການຈັດຕັ້ງປະຕິບັດຂໍ້ລິເລີ່ມ ແລະ ແຜນວຽກຂອງບັນດາຄະນະກຳມະການ ແລະ ໜ່ວຍງານທີ່ກ່ຽວຂ້ອງ ເພື່ອເພີ່ມທະວີຄວາມເລິກເຊິ່ງໃນການເຊື່ອມໂຍງດ້ານການເງິນ-ທະນາຄານໃນພາກພື້ນ.







ກອງປະຊຸມຄະນະກຳມະການອາວຸໂສລະດັບສູງອາຊຽນ ຄັ້ງທີ 31 ໄດ້ອັດລົງດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍຜົນສຳເລັດ, ຊຶ່ງຜົນກອງປະຊຸມຄັ້ງນີ້ ຈະໄດ້ນຳເອົາແຜນວຽກທັງໝົດຂຶ້ນໄປລາຍງານ ແລະ ຂໍຮັບຮອງການຈັດຕັ້ງປະຕິບັດຢູ່ໃນຂະບວນກອງປະຊຸມຮ່ວມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 13 ຊຶ່ງຈະຈັດຂຶ້ນໃນລະຫວ່າງວັນທີ 07-10 ເມສາ 2026 ທີ່ມະນີລາ ປະເທດ ຟີລິບປິນ.

**ຂ່າວ ແລະ ພາບ: ກົມຮ່ວມມືສາກົນ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**